# ກະຕ່າຍໝາຍຈັນ



ຄັ້ງນຶ່ງ    ອ້າຍເອົາຮູບໃຫ້ເຈົ້າ    ຄືກະຕ່າຍໝາຍຈັນ
ປຽບດັ່ງຄືຄວາມຝັນ    ເມື່ອຕື່ນມາກໍຫາຍຈ້ອຍ
ນີ້ແຫລະນໍຕົວຂ້ອຍ    ຊາຍພອຍພັດພາກຄູ່
ຮັກຫລາຍຢູ່ ແຕ່ບໍ່ໄດ້    ເໝືອນດ້ານດັ່ງໃຈ ໝ່າຍເດ

ເໝືອນກະຕ່າຍນ້ອຍໆ    ຄອຍແຕ່ນັ່ງໝາຍຈັນ
ບໍ່ມີວັນຈັບບາຍ    ຄວ້າເອົາມາຄອງໄດ້
ໃຈໝາຍປອງເອົາເຈົ້າ    ແຕ່ສູງເກີນຄວາມສາມາດ
ບໍ່ອາດຢື້ຢ່ອງໄດ້    ມີແຕ່ໄຫ້ນັ່ງງຶງ ນ້ອງເອີຍ

ຍາມແລງ    ໄດ້ແຕ່ແຫງນມອງຟ້າ    ຫລຽວຫາຈັນຜູ້ສະງ່າ



ເໝືອນອ້າຍຄຶດຮອດຫລ້າ    ນາງນ້ອງເຈົ້າຜູ້ງາມ
ຈິດໃຈອ້າຍຊອກຊ້ຳ    ໄດ້ແຕ່ເບິ່ງແຍງນາງ
ເໝືອນດັ່ງຄົນຜິດຫວັງ    ກະຕ່າຍຄອງຄອຍເຈົ້າ

ສາທຸ    ກ່ອນຈະຊີວາມ້ວຍ    ຂໍໃຫ້ຊາຍໄດ້ພົບອຸ່ນ ແນ່ທ້ອນ
ເຖິງຈະບໍ່ໄດ້ເຈົ້າ    ອ້າຍຂໍເຝົ້າເບິ່ງແຍງ ນ້ອງເອີຍ
ຈົນວ່າມັນຮຸ່ງແຈ້ງ    ຈັນຈຶ່ງຫ່າງເຫີນໜີ
ບາດຣາຕຣີກັບຄືນ    ຈຶ່ງຄອຍເຫັນຈັນເຈົ້າ

ງາມເດ ງາມສີໜ້າ    ສາຍຕາກໍຫວານຊື່ນ
ໄດ້ແຕ່ຢືນເບິ່ງຟ້າ    ຕາອ້າຍສົ່ງໃສ່ນາງ
ມີແຕ່ອ້າຍເບິ່ງນ້ອງ    ນ້ອງບໍ່ເບິ່ງກັບຄືນ ບໍ່ນໍ
ຂໍສົ່ງແສງເຍືອງທາງ    ອ້າຍແນ່ເດີຈັນເຈົ້າ

ແສງຈັນເປັນແສງແຈ້ງ    ນວນຕາຂອງຜູ້ເບິ່ງ
ເໝືອນດັ່ງຄົນເບິ່ງນ້ອງ    ໃຜກໍຈ້ອງຢາກຈະຊົມ ເຈົ້າແລ້ວ
ຜູ້ທີ່ໄດ້ເຈົ້າແລ້ວ    ເຂົາຄືງຢູ່ເປັນສຸກ ເດນໍ
ແຕ່ອ້າຍເປັນຄົນທຸກ    ໄດ້ແຕ່ມອງນາງນ້ອງ

ຈັນເອີຍຈັນຢູ່ຟ້າ  ເຈົ້າຊ່າງຫ່າງເຫີນໄກ ແທ້ນໍ
ບໍ່ເຫັນໃຈຊາຍພອຍ  ກະຕ່າຍຕີນຕົວນ້ອຍ
ເໝືອນດັ່ງນາງໜີໜ້າ  ບໍ່ທັນມາພົບກະຕ່າຍ
ມີແຕ່ໄດ້ນັ່ງເຝົ້າ  ແນມເຈົ້າສະງ່າຈັນ ເຈົ້າເອີຍ

ຈັ່ງໃດ  ເມື່ອຮູ້ວ່າບໍ່ໄດ້  ກໍໃຫ້ສິ່ງແສງມາ ຈັນເອີຍ
ໃຫ້ເຮົາສຳພັນກັນ  ຈະໝັ່ນຕິດຕາມເຈົ້າ
ຍາມແລງຈະມາເຝົ້າ  ດວງຈັນຜູ້ສະງ່າ
ຊົ່ວຊີວາກະຕ່າຍນ້ອຍ  ໃຈຂ້ອຍກໍດັ່ງກັນ ນີ້ແຫລ້ວ

ສາທຸ  ຂໍໃຫ້ດວງຈັນຂ້ອຍ  ຈົ່ງສຸກຂີຍອດຍິ່ງ ໃດເນີ
ໃຫ້ເປັນຍິງຍອດຢ້ຽມ  ຝັງໄວ້ຢູ່ໃຈ ອ້າຍທ້ອນ
ກະຕ່າຍຄືບັກອ້າຍ  ຈະໝາຍຢູ່ບໍ່ມີລະ
ເຖິງຈະຊີວາວາຍ  ຈະໝັ່ນໝາຍຈັນເຈົ້າ

ທຸກຄືນຈະມາເຝົ້າ  ແຍງຈັນຜູ້ໃສສ່ອງ
ຂໍໃຫ້ອ້າຍ ແລະນ້ອງ  ສອງກາ້ໃຫ້ຮັກກັນ
ກະຕ່າຍຍັງໝາຍໝັ້ນ  ດວງຈັນຜູ້ສູງສົ່ງ ນັ້ນເດ
ອ້າຍກໍຫລົງຮັກນ້ອງ  ເໝືອນດ້າມດັ່ງກັນ ນັ້ນແຫລ້ວ

ລາກ່ອນເດີນ້ອງແກ້ວ  ຜູ້ປຽບດັ່ງດວງຈັນ
ເຈົ້ານັ້ນເປັນດວງໃຈ  ບ່າວພີ່ຊາຍນານແລ້ວ
ແຕ່ວ່າຈຳເປັນແຫລ້ວ  ແນວຊາຍຄືກະຕ່າຍ
ໄດ້ແຕ່ໝາຍມັກນ້ອງ  ມອງໜ້າເບິ່ງແຕ່ຈັນ ນ້ອງເອີຍ

ດີໃຈຈັນສ່ອງແຈ້ງ  ແສງສີ່ງລົງມາ ທາງພີ້
ດີໃຈ ຮູ້ວ່ານາງຄືນງາມ  ບໍ່ໄດ້ລືມຕົວອ້າຍ
ດວງໃຈ ດວງຈັນຂ້ອຍ  ຍັງສົດສວຍຄືເກົ່າ ໃດນໍ
ຍາມໃດຄຶດຮອດເຈົ້າ  ກໍມາເຝົ້ານັ່ງເບິ່ງຈັນ ນ້ອງເອີຍ.

*ອ. ທອມອ່ອນ*